## ສົມທຽບຂໍ້ມູນແຮງງານລາວທີ່ໄດ້ປັບສະຖານະພາບຢູ່ຣາຊະອານາຈັກໄທ ໃນປີ 2015 ແລະ ຄາດຄະເນແຮງງານລາວທີ່ກຽມປັບສະຖານະພາບ ຕາມການລາຍງານ ຂອງກົມການປົກຄອງ ຣາຊະອານາຈັກໄທ ໃນປີ 2017

### ສົມທຽບເກນອາຍຸ ຂອງແຮງງານລາວ ທີ່ປັບສະຖານະພາບ ຢູ່ຣາຊະອານາຈັກໄທ ປີ 2015 ແລະ ປີ 2017

**ຮູບທີ 14 ສະແດງສົມທຽບເກນອາຍຸຂອງແຮງງານລາວທີ່ປັບສະຖານະພາບ ຢູ່ຣາຊະອານາຈັກໄທ ປີ 2015 ແລະ ປີ 2017**




### ສົມທຽບຂົງເຂດ ຂອງແຮງງານລາວ ທີ່ປັບສະຖານະພາບ ຢູ່ຣາຊະອານາຈັກໄທ ປີ 2015 ແລະ ປີ 2017

ຂົງເຂດຂອງແຮງງານລາວທີ່ປັບສະຖານະພາບ ຢູ່ຣາຊະອານາຈັກໄທ ປີ 2015 ແລະ ປີ 2017 ເຫັນວ່າ: ຂົງເຂດກະສິກຳ ປີ 2017 ມີຈຳນວນຫລາຍກວ່າ ປີ 2015, ສ່ວນຂົງເຂດ ອຸດສາຫະກຳ ປີ 2017 ມີຈຳນວນທີ່ຫນ້ອຍກວ່າ ປີ 2015 ແລະ ຂົງເຂດບໍລິການ ປີ 2017 ມີຈຳນວນທີ່ຫນ້ອຍກວ່າ ປີ 2015 ເຊິ່ງຕົວເລກລວມຂອງແຮງງານລາວ ທີ່ປັບສະຖານະພາບ ທັງຫມົດ ຂອງປີ 2015 ຈຳນວນ **70.888** ຄົນ ແມ່ນມີຈຳນວນທີ່ສູງກວ່າປີ 2017 ຈຳນວນ **65.532** ຄົນ.

**ຮູບທີ 15 ສະແດງສົມທຽບຂົງເຂດຂອງແຮງງານລາວ ທີ່ປັບສະຖານະພາບ ຢູ່ຣາຊະອານາຈັກໄທ ປີ 2015 ແລະ ປີ 2017**




ແຫຼ່ງຂໍ້ມູນ: ພະແນກສົ່ງເສີມການຈັດຫາງານ, ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

# ວາລະສານ

## ຂ່າວສານ ຕະຫລາດແຮງງານ

*Labour Market information*



# ການວິເຄາະ ການປັບສະຖານະພາບແຮງງານລາວ ທີ່ໄປເຮັດວຽກຢູ່ຣາຊະອານາຈັກໄທ ປີ 2015 ແລະ 2017



ສະບັບທີ 02 ປະຈຳໄຕມາດ ປີ 2017

ເບີໂທ & ເບີແຟັກ: 021 255 906

## ຄຳນຳ

ວາລະສານ ຂ່າວສານຕະຫລາດແຮງງານ ເປັນວາລະສານສະບັບທີ 2 ຂອງວຽກງານແຮງງານ ທີ່ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ໄດ້ພະຍາຍາມສ້າງຂຶ້ນ ໂດຍການສັງລວມຂໍ້ມູນຂອງກຳລັງແຮງງານ ໃນລະບົບ ຂອງການເກັບກຳຂໍ້ມູນ ໃນຂົງເຂດ ແຮງງານ ແລະ ສະຫວັດດີການສັງຄົມ ເພື່ອເຜີຍແຜ່ ສະພາບການ ຂອງກຳລັງແຮງງານ ໃນຮູບແບບຕ່າງໆ.

## ສາລະບານ...


- ພາວະຄວາມຕ້ອງການແຮງງານ 2
- ການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ 4
- ແຜນການຝຶກ ແລະ ພັດທະນາສີມືແຮງງານ ແຕ່ ປີ 2017-2020 ໃນທົ່ວປະເທດ ທີ່ຂຶ້ນກັບກະຊວງ ຮສສ 6
- ຄາດຄະເນແຮງງານລາວທີ່ກຽມປັບສະຖານະພາບ ຕາມການລາຍງານຂອງກົມການປົກຄອງ ຣາຊະອານາຈັກໄທ ໃນປີ 2017 7


## ຈຸດປະສົງ...

- **ເພື່ອເຜີຍແຜ່ສະຖານະການ ຂອງຕະຫຼາດແຮງງານ ແລະ ຜົນການວິໄຈ ຂອງຕະຫລາດແຮງງານ**

## ຄະນະຜູ້ຈັດພິມ...


**ຊີ້ນຳລວມ :** ທ່ານ ພູວັນ ຈັນທະວົງ

ຫົວໜ້າກົມ ພັດທະນາສີມືແຮງງານ ແລະ ຈັດຫາງານ

**ບັນນາທິການ :** ທ່ານ ໄທ ແສງອາລຸນ

ຮອງຫົວໜ້າກົມພັດທະນາສີມືແຮງງານແລະຈັດຫາງານ

**ຮຽບຮຽງ ເນື້ອໃນ:**

ທ່ານ ພຸດທະວົງ ພູມມະສັກ ຮັກສາການພະແນກ

ທ່ານ ນ. ສ້ອຍສະຫວັນ ອຸທະພອນ ຮອງພະແນກ

ທ່ານ ເພັດສະໝອນ ອ້ອນດາລາ ວິຊາການ

ທ່ານ ຂັນໄຊ ຍຸຈັນໄຕ ວິຊາການ


## ພາວະຄວາມຕ້ອງການແຮງງານ

ສະພາບຄວາມຕ້ອງການແຮງງານໃນຊ່ວງເດືອນມັງກອນ ເຖິງ ເດືອນມີນາ 2017 ເຫັນວ່າ ມີຜູ້ສະໝັກວຽກ ໜ້ອຍກວ່າ ຄວາມຕ້ອງການແຮງງານ ໂດຍທີ່ຄວາມຕ້ອງການແຮງງານ ມີຈຳນວນ **16,748** ຄົນ ແຕ່ຜູ້ຊອກຫາວຽກເຮັດມີພຽງແຕ່ **84** ຄົນ

**ຮູບທີ 1 ຄວາມຕ້ອງການແຮງງານ ແລະ ຜູ້ສະໝັກວຽກ**




### ຄວາມຕ້ອງການແຮງງານ

ຂະແໜງການທີ່ມີຄວາມຕ້ອງການແຮງງານສູງສຸດ 5 ຂະແໜງ ປະກອບມີ ອັນດັບ 1 ຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ 5,652 ຕຳແໜ່ງ ຄິດສະເລ່ຍ 33.75 %, ອັນດັບ 2 ຂະແໜງອຸດສາຫະກຳການຜະລິດ 2,760 ຕຳແໜ່ງ ຄິດສະເລ່ຍ 16.48 %, ອັນດັບ 3 ຂະແໜງຂຸດຄົ້ນ ແລະ ຂຸດຫີນ 2,074 ຕຳແໜ່ງ ຄິດສະເລ່ຍ 12.38 %, ອັນດັບ 4 ຂະແຫນງຂາຍຍົກ ແລະ ຂາຍຍ່ອຍ; ການສ້ອມແປງລົດຈັກ ແລະ ລົດໃຫຍ່ 1,931 ຕຳແໜ່ງ ຄິດສະເລ່ຍ 11.53 % ແລະ ອັນດັບ 5 ຂະແຫນງກໍ່ສ້າງ 1,248 ຕຳແຫນ່ງ ຄິດສະເລ່ຍ 7.45 % .

ໂດຍແຂວງທີ່ມີຄວາມຕ້ອງການແຮງງານຫຼາຍທີ່ສຸດ 5 ອັນດັບໄດ້ແກ່: ອັນດັບ 1 ນະຄອນຫລວງວຽງຈັນ 4,907 ຕຳແໜ່ງ, ອັນດັບ 2 ເຊກອງ 2,816 ຕຳແໜ່ງ, ອັນດັບ 3 ຊຽງຂວາງ 1,754 ຕຳແໜ່ງ, ອັນດັບ 4 ໄຊຍະບູລີ 932 ຕຳແໜ່ງ ແລະ ອັນດັບ 5 ຈຳປາສັກ 930 ຕຳແໜ່ງ. ນອກຈາກນີ້ ອັດຕາຜົນຕອບແທນ ທີ່ນາຍຈ້າງສະເໜີໃຫ້ແຮງງານ ອັນດັບ 1 ແມ່ນ 1 ລ້ານ - 2 ລ້ານ ຈຳນວນ 12,979 ຕຳແໜ່ງ ຄິດສະເລ່ຍ 77.50 %, ອັນດັບ 2 ແມ່ນ 2 ລ້ານ - 5 ລ້ານ ຈຳນວນ 1,629 ຕຳແໜ່ງ ຄິດສະເລ່ຍ 9.73 % ແລະ ອັນດັບ 3 ແມ່ນຕ່ຳກວ່າ 1 ລ້ານ ຈຳນວນ 1,356 ຕຳແໜ່ງ ຄິດສະເລ່ຍ 8.10 %

ແຫຼ່ງຂໍ້ມູນ: ພະແນກຂໍ້ມູນຂ່າວສານຕະຫຼາດແຮງງານ, ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ



## ຄາດຄະເນແຮງງານລາວທີ່ກຽມປັບສະຖານະພາບ ຕາມການລາຍງານ ຂອງກົມການປົກຄອງ ຣາຊະອານາຈັກໄທ ໃນປີ 2017

ຕາມການລາຍງານຂອງກົມການປົກຄອງ ຣາຊະອານາຈັກໄທ ໄດ້ຄາດຄະເນແຮງງານລາວທີ່ກຽມປັບສະຖານະພາບ ໃນປີ 2017 ມີຈຳນວນ ທັງໝົດ **65,532** ຄົນ ຍິງ **35,114** ຄົນ ແລະ ຊາຍ **30,418** ຄົນ ໃນນີ້ຂົງເຂດທີ່ມີແຮງງານຢູ່ຫລາຍທີ່ສຸດ ແມ່ນ ຂົງເຂດບໍລິການ ຈຳນວນ 32,982 ຄົນ ຍິງ 20,899 ຄົນ ແລະ ຊາຍ 12,083 ຄົນ; ຮອງລົງມາແມ່ນຂົງເຂດ ກະສິກຳ ຈຳນວນ 18,295 ຄົນ ຍິງ 7,882 ຄົນ ແລະ ຊາຍ 10,413 ຄົນ ແລະ ຮອງລົງມາແມ່ນຂົງເຂດອຸດສາຫະກຳ ຈຳນວນ 14,255 ຄົນ ຍິງ 6,333 ຄົນ ແລະ ຊາຍ 7,922 ຄົນ.

**ຮູບທີ 13 ສະແດງຄາດຄະເນແຮງງານລາວທີ່ກຽມປັບສະຖານະພາບ ຕາມການລາຍງານ ຂອງກົມການປົກຄອງ ຣາຊະອານາຈັກໄທ ປີ 2017**




ໃນນັ້ນ ກຸ່ມອາຍຸທີ່ມີຈຳນວນແຮງງານຫລາຍທີ່ສຸດ 3 ກຸ່ມອາຍຸ ແມ່ນ ຊ່ວງອາຍຸລະຫວ່າງ 18-24 ປີ ຈຳນວນ 22,851 ຄົນ ຍິງ 13,094 ຄົນ ຊາຍ 9,757 ຄົນ; ຮອງລົງມາແມ່ນ ຊ່ວງອາຍຸລະຫວ່າງ 25-29 ປີ ຈຳນວນ 16,382 ຄົນ ຍິງ 8,776 ຄົນ ຊາຍ 7,606 ຄົນ ແລະ ຮອງລົງມາ ແມ່ນຊ່ວງອາຍຸ 30-34 ປີ ຈຳນວນ 11,485 ຄົນ ຍິງ 5,856 ຄົນ ຊາຍ 5,629 ຄົນ ແລະ ກຸ່ມອື່ນໆຕາມລຳດັບ.




ແຫຼ່ງຂໍ້ມູນ: ພະແນກສົ່ງເສີມການຈັດຫາງານ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

## ແຜນການຝຶກ ແລະ ພັດທະນາສີມືແຮງງານ ແຕ່ ປີ 2017-2020 ໃນທົ່ວປະເທດ ທີ່ຂຶ້ນກັບກະຊວງ ຮສສ

ຈາກຂໍ້ມູນການສັງລວມແຜນການຝຶກ ແລະ ພັດທະນາສີມືແຮງງານ ແຕ່ ປີ 2017-2020 ທີ່ຂຶ້ນກັບກະຊວງ ຮສສ ໃນຂອບເຂດທົ່ວປະເທດພົບວ່າກຳລັງແຮງງານລາວໄດ້ໃຫ້ຄວາມສົນໃຈຕໍ່ຂະແໜງການຊ່າງ ແລະ ການພັດທະນາສີມືແຮງງານຫຼາຍຂຶ້ນ ເຊິ່ງສະແດງອອກຈາກຈຳນວນໃນແຜນການຝຶກ ແລະ ພັດທະນາສີມືແຮງງານໃນແຕ່ລະສົກປີ ໂດຍ ແບ່ງອອກເປັນ 5 ລະດັບ ຄື : ລະດັບ 1 ຊ່າງລະດັບພື້ນຖານ, ລະດັບ 2 ຊ່າງເຄິ່ງຊຳນານງານ, ລະດັບ 3 ຊ່າງຊຳນານງານ, ລະດັບ 4 ນາຍຊ່າງ ແລະ ລະດັບ 5 ຜູ້ຄຸມງານ. ຈາກການແຍກຕາມມາດຕະຖານການຈັດຈຳແນກການສຶກສາ (ISCED) ແມ່ນ ສາຂາຂໍ້ມູນຂ່າວສານ ແລະ ການສື່ສານເຕັກໂນໂລຊີ ມີຈຳນວນຫຼາຍທີ່ສຸດ ໃນປີ 2017 ມີ 2,363 ຄົນ, ປີ 2018 ມີ 2,601 ຄົນ, ປີ 2019 ມີ 2,524 ຄົນ ແລະ ປີ 2020 ມີ 2,399 ຄົນ; ຕໍ່ມາແມ່ນ ສາຂາວິສະວະກຳ ແລະ ວິສະວະກຳການຄ້າ ໃນປີ 2017 ມີ 1,857 ຄົນ, ປີ 2018 ມີ 2,376 ຄົນ, ປີ 2019 ມີ 2,413 ຄົນ ແລະ ປີ 2020 ມີ 2,668 ຄົນ ແລະ ສາຂາການຜະລິດ ແລະ ຂະບວນການໃນປີ 2017 ມີ 978 ຄົນ, ປີ 2018 ມີ 1,516 ຄົນ, ປີ 2019 ມີ 1,628 ຄົນ ແລະ ປີ 2020 ມີ 1,840 ຄົນ.

**ຮູບທີ 12 ສະແດງຈຳນວນແຜນການຝຶກ ແລະ ພັດທະນາສີມືແຮງງານ ແຕ່ປີ 2017-2020 ໃນທົ່ວປະເທດ ທີ່ຂຶ້ນກັບກະຊວງ ຮສສ**

| ISCED | ປີ2017 | ປີ2018 | ປີ2019 | ປີ2020 |
|---|---|---|---|---|
| 003 ທັກສະບຸກຄົນ ແລະ ການພັດທະນາ | 2 | 10 | 10 | 22 |
| 041 ທຸລະກິດ ແລະ ການບໍລິຫານ | 1032 | 1205 | 1455 | 1720 |
| 061 ຂໍ້ມູນຂ່າວສານ ແລະ ການສື່ສານເຕັກໂນໂລຊີ | 2363 | 2601 | 2524 | 2399 |
| 071 ວິສະວະກຳ ແລະ ວິສະວະກຳການຄ້າ | 1857 | 2376 | 2413 | 2668 |
| 072 ການຜະລິດ ແລະ ຂະບວນການ | 978 | 1516 | 1628 | 1840 |
| 073 ສະຖາປັດຕະຍະກຳ ແລະ ການກໍ່ສ້າງ | 61 | 161 | 185 | 228 |
| 081 ກະສິກຳ | 86 | 100 | 205 | 220 |
| 101 ການບໍລິການໃຫ້ແກ່ບຸກຄົນ | 96 | 196 | 207 | 265 |

| ລະຫັດສາລະບານ ຂະແໜງການສຶກສາ (ISCED) | 2017 | | | | | 2018 | | | | | 2019 | | | | | 2020 | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ລະດັບ1 | ລະດັບ2 | ລະດັບ3 | ລະດັບ4 | ລະດັບ5 | ລະດັບ1 | ລະດັບ2 | ລະດັບ3 | ລະດັບ4 | ລະດັບ5 | ລະດັບ1 | ລະດັບ2 | ລະດັບ3 | ລະດັບ4 | ລະດັບ5 | ລະດັບ1 | ລະດັບ2 | ລະດັບ3 | ລະດັບ4 | ລະດັບ5 |
| 003 ທັກສະບຸກຄົນ ແລະ ການພັດທະນາ | | | 2 | | | | | | | 10 | | | 10 | | | | | 22 | | |
| 041 ທຸລະກິດ ແລະ ການບໍລິຫານ | 212 | 210 | 260 | 180 | 170 | 250 | 270 | 270 | 215 | 200 | 300 | 285 | 350 | 265 | 255 | 350 | 345 | 415 | 320 | 290 |
| 061 ຂໍ້ມູນຂ່າວສານ ແລະ ການສື່ສານເຕັກໂນໂລຊີ | 659 | 612 | 147 | 546 | 399 | 585 | 469 | 531 | 530 | 486 | 600 | 582 | 540 | 191 | 611 | 535 | 523 | 483 | 443 | 415 |
| 071 ວິສະວະກຳ ແລະ ວິສະວະກຳການຄ້າ | 710 | 304 | 182 | 382 | 279 | 540 | 495 | 544 | 450 | 347 | 640 | 625 | 603 | 125 | 420 | 645 | 650 | 643 | 405 | 325 |
| 072 ການຜະລິດ ແລະ ຂະບວນການ | 645 | 241 | 80 | 6 | 6 | 719 | 370 | 301 | 111 | 15 | 757 | 453 | 350 | 50 | 18 | 803 | 462 | 430 | 125 | 20 |
| 073 ສະຖາປັດຕະຍະກຳ ແລະ ການກໍ່ສ້າງ | 21 | 12 | 12 | 10 | 6 | 52 | 52 | 36 | 21 | | 53 | 53 | 67 | 12 | | 55 | 75 | 55 | 43 | |
| 081 ກະສິກຳ | 50 | 10 | 10 | 8 | 8 | 60 | 40 | | | | 73 | 53 | 53 | 13 | 13 | 80 | 55 | 55 | 15 | 15 |
| 101 ການບໍລິການໃຫ້ແກ່ບຸກຄົນ | 53 | 28 | 15 | | | 72 | 67 | 42 | 15 | | 80 | 77 | 50 | | | 95 | 90 | 60 | 20 | |

ແຫຼ່ງຂໍ້ມູນ: ພະແນກຄຸ້ມຄອງພັດທະນາສີມືແຮງງານ, ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ



**ຮູບທີ 2 ສະແດງຄວາມຕ້ອງການແຮງງານຈຳແນກປະເພດ ຕາມຂະແໜງເສດຖະກິດ**




A-ຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ
B- ຂະແໜງຂຸດຄົ້ນ ແລະ ຂຸດຫີນ
C- ຂະແໜງອຸດສາຫະກຳການຜະລິດ
D- ຂະແໜງໄຟຟ້າ, ແກັດ, ອາຍນ້ຳ ແລະ ການສະໜອງເຄື່ອງປັບອາກາດ
E- ຂະແໜງນ້ຳປະປາ, ທໍ່ນ້ຳເສຍ, ການຄຸ້ມຄອງຂີ້ເຫຍື້ອ ແລະ ກິດຈະກຳການຟື້ນຟູ
F-ຂະແໜງກໍ່ສ້າງ
G- ຂະແໜງຂາຍຍົກ ແລະ ຂາຍຍ່ອຍ; ການສ້ອມແປງລົດຈັກ ແລະ ລົດໃຫຍ່
H-ຂະແໜງຂົນສົ່ງ ແລະ ການເກັບຮັກສາ
I-ຂະແໜງບ່ອນຢູ່ອາໄສ ແລະ ການບໍລິການອາຫານ
J-ຂະແໜງຂໍ້ມູນຂ່າວສານ ແລະ ການສື່ສານ
K-ຂະແໜງການເງິນ ແລະ ປະກັນໄພ
L-ການເຄື່ອນໄຫວດ້ານອະສັງຫາລິ ມະຊັບ
M-ຂະແໜງຊ່ຽວຊານ, ວິທະຍາສາດ ແລະ ວິຊາການ
N-ຂະແໜງບໍລິຫານ ແລະ ການໃຫ້ບໍລິການສະໜັບສະໜູນ
P-ຂະແໜງການສຶກສາ
Q-ຂະແໜງສຸຂະພາບ ແລະ ວຽກສະຫວັດດີການສັງຄົມ
R-ຂະແໜງດ້ານສິນ, ບັນເທີງ ແລະ ການພັກຜ່ອນຍ່ອນໃຈ
S-ຂະແໜງໃຫ້ບໍລິການອື່ນໆ

### ຜູ້ສະໝັກວຽກ

ໃນໄລຍະເດືອນມັງກອນ ຫາ ເດືອນມີນາ 2017 ນີ້ ມີຜູ້ທີ່ກຳລັງຈະຈົບ ແລະ ຕ້ອງການຊອກວຽກເຮັດງານທຳ ຈຳນວນທັງໝົດພຽງແຕ່ 84 ຄົນ ຍິງ 40 ຄົນ ໃນນັ້ນ ແຂວງຈຳປາສັກ ມີຈຳນວນຜູ້ສະໝັກວຽກຫຼາຍທີ່ສຸດ ຈຳນວນ 46 ຄົນ ຄິດສະເລ່ຍ 54.76 % ຮອງລົງມາແມ່ນ ແຂວງບໍ່ແກ້ວ ຈຳນວນ 30 ຄົນ ຄິດສະເລ່ຍ 35.72 % ແລະ ແຂວງຫລວງພະບາງ ມີຈຳນວນ ພຽງ 08 ຄົນ ຄິດສະເລ່ຍ 9.52 %.

ຜູ້ສະໝັກວຽກສ່ວນໃຫຍ່ ແມ່ນຈົບການສຶກສາໃນລະດັບ ຊັ້ນສູງ ຈຳນວນ 41 ຄົນ ຄິດສະເລ່ຍ 49 % ຮອງລົງມາ ແມ່ນ ລະດັບຊັ້ນກາງ ຈຳນວນ 32 ຄົນ ຄິດສະເລ່ຍ 38 % ຮອງລົງມາ ແມ່ນ ລະດັບມັດທະຍົມຕອນປາຍ ຈຳນວນ 09 ຄົນ ຄິດສະເລ່ຍ 11 % ແລະ ລະດັບຊັ້ນຕົ້ນ ຈຳນວນ 02 ຄົນ ຄິດສະເລ່ຍ 2 %.

**ຮູບທີ 3 ສະແດງຜູ້ສະໝັກວຽກຈຳແນກຕາມລະດັບການສຶກສາ**




ກຸ່ມອາຍຸທີ່ຜູ້ສະໝັກ ທີ່ຫລາຍທີ່ສຸດ ຢູ່ໃນອາຍຸລະຫວ່າງ 20-25 ປີ ຈຳນວນ 65 ຄົນ ຄິດສະເລ່ຍ 77.38 %, ຮອງລົງມາ ແມ່ນ ອາຍຸລະຫວ່າງ 26-35 ປີ ຈຳນວນ 11 ຄົນ ຄິດສະເລ່ຍ 13.10 %, ຮອງລົງມາ ແມ່ນ ອາຍຸຕ່ຳກວ່າ 20 ປີ 07 ຄົນ ຄິດສະເລ່ຍ 08.33 % ແລະ ອາຍຸລະຫວ່າງ 46-50 ປີ ຈຳນວນ 01 ຄົນ ຄິດສະເລ່ຍ 1.19 %.

**ຮູບທີ 4 ສະແດງກຸ່ມອາຍຸຜູ້ສະໝັກວຽກຈຳແນກຕາມລະດັບການສຶກສາ**




ແຫຼ່ງຂໍ້ມູນ: ພະແນກຂໍ້ມູນຂ່າວສານຕະຫຼາດແຮງງານ, ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

## ການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ

ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍ ການອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດ ສະບັບເລກທີ່ 62/ນຍ ລົງວັນທີ່ 13/11/2015 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮ່ວມກັບ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດ ທີ່ເຄື່ອນໄຫວບໍ່ຖືກຕ້ອງຢູ່ ສປປ ລາວ ນັບຕັ້ງແຕ່ກາງເດືອນ ທັນວາ 2015 ເຖິງທ້າຍເດືອນ ຕຸລາ 2016 ທັງໝົດ 17 ແຂວງ ແລະ 1 ນະຄອນຫລວງວຽງຈັນ ສາມາດອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດ ທີ່ຍັງເຄື່ອນໄຫວບໍ່ຖືກຕ້ອງ ໄດ້ທັງໝົດ ຈຳນວນ **24,372** ຄົນ ເປັນຍິງ ຈຳນວນ **7,056** ຄົນ ແລະ ຊາຍ ຈຳນວນ **17,316** ຄົນ.

**ຮູບທີ 5 ສະແດງຈຳນວນທີ່ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດ ທີ່ຍັງເຄື່ອນໄຫວບໍ່ຖືກຕ້ອງ**




ໃນນັ້ນຜູ້ຈະປັບສະຖານະພາບ ຈຳນວນ **7,348** ຄົນ ແລະ ຜູ້ຂໍເວລາຊຳລະສະສາງ ຈຳນວນ **17,024** ຄົນ.

**ຮູບທີ 6 ສະແດງຈຳນວນຜູ້ຈະປັບສະຖານະພາບ ແລະ ຜູ້ຂໍເວລາຊຳລະສະສາງ**




ສຳລັບການແຍກເປັນສັນຊາດ ແມ່ນແບ່ງເປັນ 4 ສັນຊາດຄື: 1.) ສັນຊາດ ຫວຽດນາມ ຈຳນວນ 19,880 ຄົນ ເປັນຍິງ 5,869 ຄົນ ແລະ ຊາຍ 14,011 ຄົນ; 2.) ສັນຊາດ ຈີນ ຈຳນວນ 3,668 ຄົນ ເປັນຍິງ 1,176 ຄົນ ແລະ ຊາຍ 2,492 ຄົນ; 3.) ສັນຊາດ ໄທ ຈຳນວນ 694 ຄົນ ເປັນຍິງ 132 ຄົນ ແລະ ຊາຍ 562 ຄົນ ແລະ 4.) ສັນຊາດອື່ນໆ ຈຳນວນ 130 ຄົນ ເປັນຍິງ 17 ຄົນ ແລະຊາຍ 113 ຄົນ.

**ຮູບທີ 7 ສະແດງຈຳນວນສັນຊາດ ຂອງຄົນຕ່າງປະເທດ ທີ່ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ**




ໃນນີ້ ສັນຊາດ ຫວຽດນາມ ຜູ້ຈະປັບສະຖານະພາບ ຈຳນວນ 4,645 ຄົນ ແລະ ຜູ້ຂໍເວລາຊຳລະສະສາງ ຈຳນວນ 15,235ຄົນ; ສັນຊາດ ຈີນ ຜູ້ຈະປັບສະຖານະພາບ ຈຳນວນ 2,315 ຄົນ ແລະ ຜູ້ຂໍເວລາຊຳລະສະສາງ ຈຳນວນ 1,353 ຄົນ; ສັນຊາດ ໄທ ຜູ້ຈະປັບສະຖານະພາບ ຈຳນວນ 371 ຄົນ ແລະ ຜູ້ຂໍເວລາຊຳລະສະສາງ ຈຳນວນ 323 ຄົນ ແລະ ສັນຊາດອື່ນໆ ຜູ້ຈະປັບສະຖານະພາບ ຈຳນວນ 64 ຄົນ ແລະ ຜູ້ຂໍເວລາຊຳລະສະສາງ ຈຳນວນ 66 ຄົນ.

**ຮູບທີ 8 ສະແດງຈຳນວນສັນຊາດ ຂອງຜູ້ຈະປັບສະຖານະພາບ ແລະ ຜູ້ຂໍເວລາຊຳລະສະສາງ**




ແຫຼ່ງຂໍ້ມູນ: ບົດລາຍງານ ສະບັບເລກທີ 0302/ຮສສ, ລົງວັນທີ 03/02/2017 ກ່ຽວກັບຜົນຂອງການຈັດຕັ້ງປະຕິບັດການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ: ກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.



## ການນຳເຂົ້າແຮງງານຕ່າງປະເທດ ທີ່ມາເຮັດວຽກ ຢູ່ ສປປ ລາວ

ການນຳເຂົ້າແຮງງານຕ່າງປະເທດທີ່ມາເຮັດວຽກ ຢູ່ ສປປ ລາວ ໃນຊ່ວງເດືອນມັງກອນ ຫາ ເດືອນມີນາ 2017 ມີຈຳນວນທັງໝົດ **3,742** ຄົນ ຍິງ **826** ຄົນ ຊາຍ **2,916** ຄົນ ໃນນີ້ ສັນຊາດທີ່ນຳເຂົ້າແຮງງານຕ່າງປະເທດ ຫລາຍທີ່ສຸດ ແມ່ນສັນຊາດຈີນ ຈຳນວນ 1,842 ຄົນ ຮອງລົງມາ ແມ່ນສັນຊາດຫວຽດນາມ ຈຳນວນ 728 ຄົນ ຮອງລົງມາ ແມ່ນສັນຊາດໄທ ຈຳນວນ 666 ຄົນ ແລະ ສັນຊາດອື່ນໆ ຈຳນວນ 506 ຄົນ.

**ຮູບທີ 9 ສະແດງຈຳນວນສັນຊາດ ທີ່ນຳເຂົ້າແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ**




ແຍກຕາມກຸ່ມອາຍຸທີ່ນຳເຂົ້າແຮງງານ 3 ກຸ່ມອາຍຸທີ່ຫລາຍທີ່ສຸດ ແມ່ນຊ່ວງອາຍຸລະຫວ່າງ >49 ປີ ຈຳນວນ 695 ຄົນ ຍິງ 128 ຄົນຊາຍ 567 ຄົນ; ຮອງລົງມາ ແມ່ນຊ່ວງອາຍຸລະຫວ່າງ 25-29 ປີ ຍິງ 154 ຄົນ ຊາຍ 422 ຄົນ; ຮອງລົງມາ ແມ່ນຊ່ວງອາຍຸລະຫວ່າງ 30-34 ປີ ຍິງ 136 ຄົນ ຊາຍ 437 ແລະ ຊ່ວງອາຍຸອື່ນໆ ຕາມລຳດັບ.

**ຮູບທີ 10 ສະແດງກຸ່ມອາຍຸ ທີ່ນຳເຂົ້າແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ**




| | <18 ປີ | 18-24 | 25-29 | 30-34 | 35-39 | 40-44 | 45-49 | >49 |
|---|---|---|---|---|---|---|---|---|
| ຊາຍ | 32 | 172 | 422 | 437 | 432 | 412 | 442 | 567 |
| ຍິງ | 6 | 66 | 154 | 136 | 103 | 114 | 119 | 128 |

**ຮູບທີ 11 ສະແດງຂະແໜງອຸດສາຫະກຳ ທີ່ນຳເຂົ້າແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ**




ແຫຼ່ງຂໍ້ມູນ: ພະແນກສົ່ງເສີມການຈັດຫາງານ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ